**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ

ເລກທີ 1115 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 14 ຕຸລາ 2024

# ຂໍ້ຕົກລົງ
# ວ່າດ້ວຍຂະບວນການປະເມີນຄວາມພຽງພໍຂອງທຶນ ພາຍໃນທະນາຄານທຸລະກິດ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ສະບັບເລກທີ 39/ສພຊ, ລົງວັນທີ 17 ກໍລະກົດ 2023;
- ອີງຕາມ ການຄົ້ນຄວ້າຂອງກົມຄຸ້ມຄອງທະນາຄານທຸລະກິດ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການປະເມີນຄວາມພຽງພໍຂອງທຶນ ພາຍໃນທະນາຄານທຸລະກິດ ເພື່ອໃຫ້ທະນາຄານທຸລະກິດ ມີການບໍລິຫານຄວາມສ່ຽງທີ່ດີ ແລະ ມີທຶນພຽງພໍ ໃນການຮອງຮັບຄວາມເສຍຫາຍທີ່ອາດເກີດຂຶ້ນ ທັງໃນສະພາບປົກກະຕິ ແລະ ພາວະວິກິດ ແນໃສ່ເຮັດໃຫ້ທະນາຄານທຸລະກິດ ມີຄວາມໝັ້ນຄົງ.

**ມາດຕາ 2 ຂະບວນການປະເມີນຄວາມພຽງພໍຂອງທຶນ ພາຍໃນທະນາຄານທຸລະກິດ**

ຂະບວນການປະເມີນຄວາມພຽງພໍຂອງທຶນ ພາຍໃນທະນາຄານທຸລະກິດ (Internal Capital Adequacy Assessment Process = ICAAP) ຕໍ່ໄປນີ້ເອີ້ນວ່າ "ຂະບວນການປະເມີນຄວາມພຽງພໍຂອງທຶນ" ແມ່ນການດຳເນີນ ການສ້າງນະໂຍບາຍ ແລະ ຂັ້ນຕອນ ໃນການຮັກສາຄວາມພຽງພໍຂອງທຶນ ແລະ ການບໍລິຫານຄວາມສ່ຽງ ໃຫ້ສອດຄ່ອງກັບ ຮູບແບບ, ຂະໜາດ, ລັກສະນະ ແລະ ຄວາມສັບຊ້ອນ ຂອງຜະລິດຕະພັນ ແລະ ການບໍລິການ ຂອງທະນາຄານທຸລະກິດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ທະນາຄານທຸລະກິດ** ໝາຍເຖິງ ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ທີ່ສ້າງຕັ້ງ ແລະ ດຳເນີນທຸລະກິດ ຢ່າງຖືກຕ້ອງຕາມກົດໝາຍຂອງ ສປປ ລາວ;

2. **ການທົດສອບພາວະເຄັ່ງຕຶງ (Stress Testing)** ໝາຍເຖິງ ການທົດສອບຂໍ້ສົມມຸດຖານພາວະວິກິດ ທີ່ອາດເກີດຂຶ້ນຈິງ ໂດຍນຳໃຊ້ການປະເມີນຄວາມພຽງພໍຂອງທຶນ ເພື່ອຮັບມືກັບພາວະວິກິດດັ່ງກ່າວ;

3. **ຄວາມສາມາດໃນການຮັບຄວາມສ່ຽງ (Risk Tolerance)** ໝາຍເຖິງ ລະດັບຂອງຄວາມສ່ຽງຕ່າງໆ ທີ່ທະນາຄານທຸລະກິດ ກຳນົດ ແລະ ສາມາດຮັບມືໄດ້;

4. **ຄວາມສ່ຽງທີ່ສຳຄັນ** ໝາຍເຖິງ ຄວາມສ່ຽງປະເພດຕ່າງໆ ທີ່ເກີດຂຶ້ນ ແລະ ມີຜົນກະທົບຕົ້ນຕໍຕໍ່ການດຳເນີນທຸລະກິດ ໂດຍຂຶ້ນກັບຮູບແບບ ແລະ ລັກສະນະ ຂອງທະນາຄານທຸລະກິດ.

5. **ຜູ້ບໍລິຫານລະດັບສູງ** ໝາຍເຖິງ ສະມາຊິກສະພາບໍລິຫານ, ຄະນະກຳມະການຂອງສະພາບໍລິຫານ, ສະມາຊິກຄະນະກຳມະການຂອງສະພາບໍລິຫານ, ຄະນະອຳນວຍການຂອງທະນາຄານທຸລະກິດ ແລະ ຄະນະສາຂາທະນາຄານທຸລະກິດຕ່າງປະເທດ ຫຼື ທຽບເທົ່າຕຳແໜ່ງດັ່ງກ່າວ;

**ມາດຕາ 4 ຫຼັກການການຈັດຕັ້ງປະຕິບັດຂະບວນການປະເມີນຄວາມພຽງພໍຂອງທຶນ**

ໃນຂະບວນການປະເມີນຄວາມພຽງພໍຂອງທຶນ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ຮັບປະກັນ ໃຫ້ທະນາຄານທຸລະກິດ ມີລະບົບການບໍລິຫານຄວາມສ່ຽງ ທີ່ມີຄຸນນະພາບ ແລະ ໄດ້ມາດຕະຖານ;
2. ສອດຄ່ອງກັບຮູບແບບການດຳເນີນທຸລະກິດ, ຂະໜາດ ແລະ ຄວາມສັບຊ້ອນ ຂອງຜະລິດຕະພັນ ແລະ ການບໍລິການ;
3. ຮັບປະກັນຄວາມຕໍ່ເນື່ອງ ແລະ ສອດຄ່ອງກັບຂັ້ນຕອນພາຍໃນ ຂອງທະນາຄານທຸລະກິດ;
4. ມີລັກສະນະເບິ່ງໄປຂ້າງໜ້າ (Forward-looking) ໂດຍຄຳນຶງເຖິງການປ່ຽນແປງທີ່ອາດຈະເກີດຂຶ້ນ ຕາມລັກສະນະຄວາມສ່ຽງ ແລະ ຍຸດທະສາດ ລວມທັງການປ່ຽນແປງຂອງສະພາບແວດລ້ອມພາຍນອກ ໂດຍສອດຄ່ອງກັບແຜນທຶນ ຂອງທະນາຄານທຸລະກິດ;
5. ບັນທຶກ ແລະ ຈັດເກັບຂໍ້ມູນ ກ່ຽວກັບຂະບວນການປະເມີນຄວາມພຽງພໍຂອງທຶນ ຢ່າງຄົບຖ້ວນ;
6. ສ້າງຂະບວນການປະເມີນຄວາມພຽງພໍຂອງທຶນ ທີ່ສາມາດສ່ອງແສງເຖິງ ຄວາມເປັນຈິງ, ສອດຄ່ອງກັບລະດັບທຶນທີ່ມີ ແລະ ພຽງພໍໃນການຮອງຮັບກັບບັນດາຄວາມສ່ຽງ ຂອງທະນາຄານທຸລະກິດ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ກຸ່ມຄຸ້ມຄອງທະນາຄານທຸລະກິດ ແລະ ທະນາຄານທຸລະກິດ ທີ່ເຄື່ອນໄຫວຢູ່ ສປປ ລາວ.

## ໝວດທີ 2

## ອົງປະກອບຂອງຂະບວນການປະເມີນຄວາມພຽງພໍຂອງທຶນ

**ມາດຕາ 6 ອົງປະກອບຂອງຂະບວນການປະເມີນຄວາມພຽງພໍຂອງທຶນ**

ຂະບວນການປະເມີນຄວາມພຽງພໍຂອງທຶນ ມີ ເຈັດ ອົງປະກອບຕົ້ນຕໍ ດັ່ງນີ້:

1. ການຄຸ້ມຄອງຂອງ ສະພາບໍລິຫານ ແລະ ຜູ້ບໍລິຫານລະດັບສູງ (Board and Senior Management Oversight);
2. ການປະເມີນຄວາມສ່ຽງທີ່ສຳຄັນ (Comprehensive Risk Assessment);

3. ວິທີການວັດແທກປະລິມານຄວາມສ່ຽງ (Risk Quantification Methodologies);

4. ການປະເມີນຄວາມພຽງພໍຂອງທຶນ ແລະ ການກຳນົດແຜນການ (Capital Adequacy Assessment and Planning);

5. ການທົດສອບພາວະເຄັ່ງຕຶງ (Stress Testing);

6. ການຕິດຕາມ ແລະ ການລາຍງານ (Monitoring and Reporting);

7. ການທົບທວນທີ່ເປັນເອກະລາດ (Independent Review).

**ມາດຕາ 7 ການຄຸ້ມຄອງຂອງສະພາບໍລິຫານ ແລະ ຜູ້ບໍລິຫານລະດັບສູງ**

ການຄຸ້ມຄອງຂະບວນການປະເມີນຄວາມພຽງພໍຂອງທຶນ, ສະພາບໍລິຫານ ແລະ ຜູ້ບໍລິຫານລະດັບສູງ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຄວາມຮັບຜິດຊອບຂອງສະພາບໍລິຫານ:

- ກຳນົດ ຍຸດທະສາດ, ນະໂຍບາຍ ແລະ ອົງປະກອບທີ່ສຳຄັນ ຂອງຂະບວນການປະເມີນຄວາມພຽງພໍຂອງທຶນ ເປັນຕົ້ນ ລະດັບ ແລະ ຂອບເຂດຄວາມສ່ຽງ ທີ່ທະນາຄານທຸລະກິດສາມາດຍອມຮັບໄດ້, ອັດຕາສ່ວນຄວາມພຽງພໍຂອງທຶນທີ່ເໝາະສົມ, ກອບການທົດສອບພາວະເຄັ່ງຕຶງ ໂດຍຮັບປະກັນໃຫ້ອົງປະກອບດັ່ງກ່າວ ສອດຄ່ອງກັນ;

- ຮັບຮອງເອົາແຜນທຶນຂອງທະນາຄານທຸລະກິດ ເພື່ອຮອງຮັບສະພາບປົກກະຕິ ແລະ ແຜນສຸກເສີນ ໃນກໍລະນີພົບພາວະວິກິດ;

- ຮັບຮອງເອົາ ລະບຽບການ, ຄູ່ມື ການປະເມີນຄວາມສ່ຽງ ແລະ ເຄື່ອງມືຕິດຕາມທີ່ເໝາະສົມ ເພື່ອຮັບປະກັນ ໃຫ້ການດຳເນີນງານຂອງທະນາຄານທຸລະກິດ ຢູ່ໃນຂອບເຂດຄວາມສ່ຽງທີ່ສາມາດຍອມຮັບໄດ້ ແລະ ສອດຄ່ອງກັບແຜນຍຸດທະສາດ ຂອງທະນາຄານທຸລະກິດ;

- ຮັບຮອງເອົາແຜນດຳເນີນງານ ຂອງຂະບວນການປະເມີນຄວາມພຽງພໍຂອງທຶນ ໂດຍມີການມອບໝາຍຄວາມຮັບຜິດຊອບ ຢ່າງຈະແຈ້ງ, ໂປ່ງໃສ ແລະ ຫຼີກລ້ຽງການປະຕິບັດໜ້າທີ່ຊ້ຳຊ້ອນ;

- ຮັບຮອງເອົາບົດລາຍງານ ກ່ຽວກັບຂະບວນການປະເມີນຄວາມພຽງພໍຂອງທຶນ ປະຈຳປີ ເພື່ອນຳສົ່ງໃຫ້ທະນາຄານແຫ່ງ ສປປ ລາວ;

- ສົ່ງເສີມ ແລະ ສ້າງຄວາມເຂັ້ມແຂງພາຍໃນທະນາຄານທຸລະກິດ ກ່ຽວກັບການຄວບຄຸມຄວາມສ່ຽງໃຫ້ສອດຄ່ອງກັບ ແຜນຍຸດທະສາດ, ນະໂຍບາຍ, ຂະບວນການ ແລະ ຂັ້ນຕອນການປະເມີນຄວາມພຽງພໍຂອງທຶນ;

- ຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດຂະບວນການປະເມີນຄວາມພຽງພໍຂອງທຶນ ຂອງຜູ້ບໍລິຫານລະດັບສູງ.

2. ຄວາມຮັບຜິດຊອບຂອງຜູ້ບໍລິຫານລະດັບສູງ:

- ກຳນົດວິທີການ ລະບຸ, ວັດແທກ, ຈັດການ ແລະ ລາຍງານ ບັນດາຄວາມສ່ຽງທີ່ສຳຄັນ;

- ປະເມີນລະດັບ ແລະ ທ່າອ່ຽງຄວາມສ່ຽງ ທີ່ມີຜົນກະທົບຕໍ່ລະດັບທຶນຂອງທະນາຄານທຸລະກິດ;

- ສ້າງ ແລະ ພັດທະນາ ລະບົບການຄຸ້ມຄອງຄວາມສ່ຽງ ທີ່ສາມາດເຊື່ອມໂຍງກັບການຮັກສາລະດັບຄວາມພຽງພໍຂອງທຶນ ໃຫ້ໄດ້ຕາມລະບຽບການທີ່ກຳນົດ ຫຼື ສູງກວ່າ ແລະ ສອດຄ່ອງກັບລະດັບຄວາມສ່ຽງຕົວຈິງໃນແຕ່ລະໄລຍະ;

- ປະເມີນຄວາມຕ້ອງການທຶນໃນອະນາຄົດ ໃຫ້ສອດຄ່ອງກັບແຜນທຸລະກິດ ແລະ ລະດັບຄວາມສ່ຽງຂອງທະນາຄານທຸລະກິດ;

- ສ້າງ ແລະ ພັດທະນາ ລະບົບການຄວບຄຸມພາຍໃນ ແລະ ການກວດສອບ ເພື່ອຕິດຕາມການຈັດຕັ້ງປະຕິບັດ ໃຫ້ສອດຄ່ອງກັບຄູ່ມື ຫຼື ລະບຽບການ ຂອງທະນາຄານທຸລະກິດ;

- ສ້າງລະບຽບການ ຫຼື ຄູ່ມື ໃນການທົດສອບພາວະເຄັ່ງຕຶງໃຫ້ກວມເອົາທຸລະກຳ ແລະ ລະດັບຄວາມສ່ຽງທີ່ສຳຄັນ ຂອງທະນາຄານທຸລະກິດ;
- ແຕ່ງຕັ້ງພະນັກງານຮັບຜິດຊອບທົດສອບ ພາວະເຄັ່ງຕຶງ, ເຄື່ອງມືການບໍລິຫານຄວາມສ່ຽງ, ການປະເມີນຄວາມໝັ້ນຄົງ ແລະ ການດຳເນີນງານ ລວມທັງການຮັກສາລະດັບຄວາມພຽງພໍຂອງທຶນ ໃຫ້ມີລັກສະນະເບິ່ງໄປຂ້າງໜ້າ;
- ສຶກສາ, ຄົ້ນຄວ້າ ເພື່ອໃຫ້ເຂົ້າໃຈເລິກເຊິ່ງ ຕໍ່ເນື້ອໃນ ແລະ ໂຄງສ້າງ ຂອງຂະບວນການປະເມີນຄວາມພຽງພໍຂອງທຶນ ໃຫ້ມີປະສິດທິຜົນ;
- ເຜີຍແຜ່ ແລະ ຝຶກອົບຮົມ ໃຫ້ພະນັກງານທີ່ຮັບຜິດຊອບ ແລະ ຜູ້ທີ່ກ່ຽວຂ້ອງ ໃຫ້ ຮັບຮູ້ ແລະເຂົ້າໃຈ ກ່ຽວກັບຂະບວນການປະເມີນຄວາມພຽງພໍຂອງທຶນ.

ນອກຈາກຄວາມຮັບຜິດຊອບທີ່ໄດ້ກຳນົດໄວ້ຂ້າງເທິງ ທະນາຄານທຸລະກິດ ຕ້ອງກຳນົດ ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງ ສະພາບໍລິຫານ ແລະ ຜູ້ບໍລິຫານລະດັບສູງ ໃນການຄຸ້ມຄອງຂະບວນການປະເມີນຄວາມພຽງພໍຂອງທຶນ ເພື່ອຮອງຮັບຄວາມສ່ຽງໃນທຸກດ້ານ.

## ມາດຕາ 8 ການປະເມີນຄວາມສ່ຽງທີ່ສຳຄັນ

ທະນາຄານທຸລະກິດ ຕ້ອງສ້າງລະບຽບການ ແລະ/ຫຼື ຄູ່ມື ກ່ຽວກັບຂະບວນການປະເມີນຄວາມສ່ຽງທີ່ສຳຄັນ ໃຫ້ມີເນື້ອໃນຄົບຖ້ວນ ແລະ ຮັດກຸມ, ມີຂະບວນການປະເມີນຄວາມສ່ຽງທີ່ຊັດເຈນ, ມີຄຸນນະພາບ ແລະ ສອດຄ່ອງກັບຄວາມສ່ຽງດັ່ງກ່າວ ພ້ອມທັງລວມເອົາຄວາມສ່ຽງໃນແຕ່ລະດ້ານ ເຂົ້າໃນຂະບວນການປະເມີນຄວາມພຽງພໍຂອງທຶນ.

ຂະບວນການປະເມີນຄວາມສ່ຽງທີ່ສຳຄັນ ຕ້ອງສາມາດຄວບຄຸມຄວາມສ່ຽງຕົ້ນຕໍ ດັ່ງນີ້:

1. ຄວາມສ່ຽງທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍຄວາມພຽງພໍຂອງທຶນສຳລັບທະນາຄານທຸລະກິດ, ຄວາມສ່ຽງໃນກຸ່ມດຽວກັນ ຫຼື ຄວາມສ່ຽງທີ່ມີລັກສະນະຄ້າຍຄືກັນ ເປັນຕົ້ນ ຄວາມສ່ຽງຈຸດສຸມດ້ານສິນເຊື່ອ;

2. ຄວາມສ່ຽງດ້ານສະພາບຄ່ອງ, ຄວາມສ່ຽງດ້ານອັດຕາແລກປ່ຽນ ທີ່ບັນທຶກໃນບັນຊີການຄ້າ, ຄວາມສ່ຽງດ້ານຍຸດທະສາດ, ຄວາມສ່ຽງດ້ານທຸລະກິດ, ຄວາມສ່ຽງດ້ານລະບຽບການ, ຄວາມສ່ຽງຈຸດສຸມທີ່ບໍ່ແມ່ນສິນເຊື່ອ, ຄວາມສ່ຽງດ້ານເຕັກໂນໂລຊີ ແລະ ຂໍ້ມູນ ຂ່າວສານ, ຄວາມສ່ຽງດ້ານການປ່ຽນແປງຂອງສະພາບດິນຟ້າອາກາດ, ຄວາມສ່ຽງດ້ານການຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

3. ຄວາມສ່ຽງຈາກປັດໄຈພາຍນອກ ເປັນຕົ້ນ ຈາກຜູ້ຕິດຕາມ ແລະ ຄຸ້ມຄອງ, ສະພາບເສດຖະກິດ ແລະ ສະພາບແວດລ້ອມໃນການດຳເນີນທຸລະກິດ;

4. ຄວາມສ່ຽງອື່ນ ຕາມລັກສະນະການດຳເນີນງານ ຂອງທະນາຄານທຸລະກິດ.

ກໍລະນີມີການປ່ຽນແປງ ແຜນຍຸດທະສາດ, ຮູບແບບທຸລະກິດ, ເພີ່ມຜະລິດຕະພັນ, ການບໍລິການໃໝ່ ຫຼື ການປ່ຽນແປງ ທີ່ເກີດຈາກສະພາບແວດລ້ອມພາຍນອກ ທະນາຄານທຸລະກິດຕ້ອງທົບທວນຄືນ ກ່ຽວກັບການກຳນົດ ແລະ ການປະເມີນຄວາມສ່ຽງຂອງຕົນ ພ້ອມທັງປັບປຸງແຜນການຕ່າງໆ ທີ່ຕິດພັນກັບຂະບວນການປະເມີນຄວາມພຽງພໍຂອງທຶນ.

## ມາດຕາ 9 ການວັດແທກປະລິມານຄວາມສ່ຽງ

ໃນການວັດແທກປະລິມານຄວາມສ່ຽງ ທະນາຄານທຸລະກິດ ຕ້ອງປະຕິບັດ ດັ່ງນີ້:

1. ເປັນເຈົ້າການໃນການກຳນົດວິທີການວັດແທກ ແລະ ປະເມີນຄວາມສ່ຽງແຕ່ລະດ້ານ ໂດຍໃຫ້ສອດຄ່ອງກັບຮູບແບບການດຳເນີນທຸລະກິດ ແລະ ຂະໜາດຂອງທະນາຄານທຸລະກິດ. ສຳລັບທະນາຄານທຸລະກິດທີ່ມີຜະລິດຕະພັນ ແລະ ການບໍລິການທີ່ຫຼາກຫຼາຍ ຕ້ອງມີວິທີການວັດແທກ, ປະເມີນຄວາມສ່ຽງທີ່ສັບຊ້ອນ ແລະ ສາມາດຄວບຄຸມບັນດາຄວາມສ່ຽງໄດ້;

2. ກຳນົດຕົວຊີ້ວັດຕົ້ນຕໍ ແລະ ການຕັ້ງຂໍ້ສົມມຸດຖານ ທີ່ນຳໃຊ້ເຂົ້າໃນແບບຈຳລອງ ຢ່າງຊັດເຈນ ແລະ ສອດຄ່ອງກັບແຕ່ລະຄວາມສ່ຽງ;

3. ພະນັກງານ ແລະ ຜູ້ບໍລິຫານລະດັບສູງຕ້ອງ ຮັບຮູ້ ແລະ ທຳຄວາມເຂົ້າໃຈ ຢ່າງລະອຽດ, ຄົບຖ້ວນ ກໍລະນີນຳໃຊ້ລະບົບ ຫຼື ແບບຈຳລອງ ຈາກພາຍນອກ;

4. ນຳໃຊ້ວິທີການປະເມີນຄວາມສ່ຽງ ແລະ ຄວາມພຽງພໍຂອງທຶນ ທັງທາງດ້ານປະລິມານ ແລະ ຄຸນນະພາບ. ສຳລັບຄວາມສ່ຽງທີ່ຕິດພັນກັບດ້ານຄຸນນະພາບ ເປັນຕົ້ນ ຄວາມສ່ຽງດ້ານຊື່ສຽງ, ຄວາມສ່ຽງດ້ານຍຸດທະສາດ ທີ່ບໍ່ສາມາດນຳໃຊ້ຮູບແບບການປະເມີນດ້ານປະລິມານ ຕ້ອງນຳໃຊ້ວິທີການປະເມີນທາງດ້ານຄຸນນະພາບ ໂດຍເອົາຂໍ້ມູນດ້ານອື່ນມາສົມທົບເຂົ້າໃນການປະເມີນຕື່ມ;

5. ມີຂະບວນການປະເມີນທີ່ເປັນລະບົບ ແລະ ມີກົນໄກການຄວບຄຸມທີ່ພຽງພໍ ເພື່ອຮັບປະກັນດ້ານຄຸນນະພາບ ຂອງຂໍ້ມູນທີ່ນຳໃຊ້ເຂົ້າໃນແບບຈຳລອງ.

**ມາດຕາ 10 ການປະເມີນຄວາມພຽງພໍຂອງທຶນ ແລະ ການກຳນົດແຜນທຶນ**

ທະນາຄານທຸລະກິດ ຕ້ອງມີທຶນທີ່ເໝາະສົມ ທັງດ້ານປະລິມານ ແລະ ຄຸນນະພາບ ເພື່ອສາມາດຮອງຮັບກັບລັກສະນະຄວາມສ່ຽງຂອງຕົນ ພ້ອມທັງຮັບປະກັນວ່າ ນອກຈາກທຶນ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍຄວາມພຽງພໍຂອງທຶນສຳລັບທະນາຄານທຸລະກິດແລ້ວ ທະນາຄານທຸລະກິດ ຍັງສາມາດມີທຶນຮອງຮັບຄວາມສ່ຽງທີ່ອາດຈະເກີດຂຶ້ນ.

ທະນາຄານທຸລະກິດ ຕ້ອງກຳນົດ, ປະເມີນ ແລະ ຮັກສາລະດັບຄວາມພຽງພໍຂອງທຶນ ໃຫ້ສອດຄ່ອງກັບລະດັບທຶນທີ່ໄດ້ກຳນົດໄວ້ໃນຂະບວນການປະເມີນຄວາມພຽງພໍຂອງທຶນ ໂດຍພິຈາລະນາປັດໄຈສຳຄັນ, ແນວທາງ ແລະ ວິທີການໃນການປະເມີນຄວາມພຽງພໍຂອງທຶນ ໃຫ້ເໝາະສົມກັບຄວາມສ່ຽງທີ່ມີຢູ່ ແລະ ຄວາມສ່ຽງທີ່ຈະເກີດຂຶ້ນ ດັ່ງນີ້:

1. ຄວາມສ່ຽງທີ່ສຳຄັນພາຍໃຕ້ສະພາບປົກຕິ ຊຶ່ງທະນາຄານທຸລະກິດ ຕ້ອງປະຕິບັດຫຼັກການຮັກສາຄວາມພຽງພໍຂອງທຶນຂັ້ນຕ່ຳຕາມລະບຽບການ ແລະ ການນຳໃຊ້ທຶນ ເພື່ອຮອງຮັບຄວາມສ່ຽງທີ່ສຳຄັນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງຂໍ້ຕົກລົງສະບັບນີ້;

2. ຄວາມສ່ຽງທີ່ສຳຄັນພາຍໃຕ້ພາວະວິກິດ ທີ່ມາຈາກຜົນການທົດສອບພາວະເຄັ່ງຕຶງ ທີ່ສົ່ງຜົນກະທົບຕໍ່ຄວາມພຽງພໍຂອງທຶນ ຊຶ່ງທະນາຄານທຸລະກິດ ຕ້ອງກະກຽມແຜນທຶນ ຫຼື ເພີ່ມທຶນໃຫ້ພຽງພໍ ເພື່ອຮອງຮັບຜົນກະທົບດັ່ງກ່າວ.

ທະນາຄານທຸລະກິດ ຕ້ອງສ້າງແຜນທຶນ ເພື່ອຮອງຮັບສະພາບປົກກະຕິ ໂດຍຄາດຄະເນໄລຍະ ສາມ ປີຕໍ່ໜ້າ ແລະ ສອດຄ່ອງກັບ ແຜນການຄາດຄະເນທາງການເງິນ, ແຜນການດຳເນີນທຸລະກິດ ແລະ ລະດັບຄວາມສ່ຽງທີ່ສາມາດຍອມຮັບໄດ້ ໂດຍອີງຕາມຜົນການທົດສອບພາວະເຄັ່ງຕຶງ ທີ່ສົ່ງຜົນກະທົບຕໍ່ກັບຄວາມພຽງພໍຂອງທຶນ. ເນື້ອໃນແຜນທຶນປະກອບມີ ແຜນຍຸດທະສາດໃນການລະດົມທຶນ, ການຈັດສັນທຶນ ແລະ ແຜນສຸກເສີນໃນກໍລະນີພົບພາວະວິກິດ.

ນອກຈາກນີ້, ທະນາຄານທຸລະກິດຕ້ອງກຳນົດວິທີການ ແລະ ຂະບວນການໃນການເພີ່ມທຶນ ໃຫ້ເປັນໄປຕາມແຜນທຶນ ແລະ ກະກຽມແຜນການສຸກເສີນ ເພື່ອຮອງຮັບກໍລະນີທີ່ບໍ່ສາມາດເພີ່ມທຶນໄດ້ຕາມແຜນການເບື້ອງຕົ້ນ.

**ມາດຕາ 11 ການທົດສອບພາວະເຄັ່ງຕຶງ**

ໃນການທົດສອບພາວະເຄັ່ງຕຶງ ທະນາຄານທຸລະກິດ ຕ້ອງປະຕິບັດໜ້າວຽກຕົ້ນຕໍ ດັ່ງນີ້:

1. ມີຂະບວນການປະເມີນຄວາມພຽງພໍຂອງທຶນ ໂດຍຮັບປະກັນການທົດສອບພາວະເຄັ່ງຕຶງທີ່ເຂັ້ມງວດ ແລະ ມີການກຳນົດຂໍ້ສົມມຸດຖານ ທີ່ສາມາດສ່ອງແສງເຖິງສະຖານະການທີ່ຈະເປັນໄປໄດ້ ຫຼື ຄາດວ່າຈະມີການປ່ຽນແປງໃນສະພາບຕະຫຼາດ ທີ່ຈະສົ່ງຜົນກະທົບຕໍ່ທະນາຄານທຸລະກິດ;

2. ທົດສອບພາວະເຄັ່ງຕຶງ ໃຫ້ເໝາະສົມ ທັງໃນ ສະພາບປົກກະຕິ ຫຼື ກໍລະນີເກີດພາວະວິກິດ ເພື່ອໃຫ້ສາມາດເຫັນໄດ້ເຖິງສິ່ງທີ່ຈະມີການປ່ຽນແປງ ແລະ ຈຸດທີ່ຍັງຮັກສາໄດ້ໃນລະດັບທີ່ມີຄວາມໝັ້ນຄົງ;

3. ວິເຄາະຜົນກະທົບຈາກການທົດສອບພາວະເຄັ່ງຕຶງ ທີ່ມີຜົນຕໍ່ຖານະການເງິນຂອງຕົນ ທັງໃນປັດຈຸບັນ ແລະ ອະນາຄົດ ໂດຍສະເພາະຜົນກະທົບຕໍ່ທຶນ ແລະ ຄວາມພຽງພໍຂອງທຶນ;

4. ທົດສອບພາວະເຄັ່ງຕຶງ ເມື່ອເກີດສະພາວະດັ່ງກ່າວ;

5. ມີສ່ວນຮ່ວມໂດຍກົງຂອງຜູ້ບໍລິຫານລະດັບສູງ ໃນການກຳນົດຈຸດປະສົງການທົດສອບພາວະເຄັ່ງຕຶງ, ກຳນົດສະຖານະການ ແລະ ຂໍ້ສົມມຸດຖານ ທີ່ໃຊ້ໃນການທົດສອບ, ປຶກສາຫາລື ແລະ ພິຈາລະນາ ຕໍ່ກັບຜົນທີ່ໄດ້ຮັບຈາກການທົດສອບພາວະເຄັ່ງຕຶງ, ກຳນົດມາດຕະການແກ້ໄຂ ແລະ ຕົກລົງບັນຫາທີ່ກ່ຽວຂ້ອງ;

6. ນຳໃຊ້ສະຖານະການ ແລະ ຂໍ້ສົມມຸດຖານ ທີ່ຖືກຕ້ອງ ແລະ ເໝາະສົມ ເຂົ້າໃນການທົດສອບພາວະເຄັ່ງຕຶງ;

7. ໄດ້ຮັບການທົບທວນຢ່າງເອກະລາດ ແລະ ເປັນປົກກະຕິ;

8. ກຳນົດບັນດາສະຖານະການ, ຂໍ້ສົມມຸດຖານ ທີ່ນຳໃຊ້ ລວມທັງ ຜົນໄດ້ຮັບຈາກການທົດສອບພາວະເຄັ່ງຕຶງ ໃນບົດລາຍງານຂະບວນການປະເມີນຄວາມພຽງພໍຂອງທຶນ ທີ່ສົ່ງໃຫ້ທະນາຄານແຫ່ງ ສປປ ລາວ.

## ມາດຕາ 12 ການຕິດຕາມ ແລະ ການລາຍງານ

ທະນາຄານທຸລະກິດ ຕ້ອງສ້າງຂະບວນການຕິດຕາມ ແລະ ກົນໄກ ການຄຸ້ມຄອງທີ່ຮັດກຸມ ເພື່ອຮັບປະກັນດ້ານຄຸນນະພາບ ແລະ ຄວາມຄົບຖ້ວນຂອງຂໍ້ມູນ. ທະນາຄານທຸລະກິດ ຕ້ອງມີຂະບວນການຕິດຕາມ ແລະ ລາຍງານ ຢ່າງເປັນຮູບປະທຳ, ຊັດເຈນ ແລະ ທັນສະພາບການ ເພື່ອໃຫ້ສາມາດປະເມີນຜົນກະທົບຈາກການປ່ຽນແປງຄວາມສ່ຽງ ຕໍ່ກັບຄວາມພຽງພໍຂອງທຶນ ຊຶ່ງຂະບວນການດັ່ງກ່າວ ຕ້ອງມີລັກສະນະຕົ້ນຕໍ ດັ່ງນີ້:

1. ສະພາບໍລິຫານ ແລະ ຜູ້ບໍລິຫານລະດັບສູງ ຕ້ອງໄດ້ຮັບການລາຍງານຂໍ້ມູນດ້ານຄວາມສ່ຽງ ຢ່າງເປັນປະຈຳ ເພື່ອໃຫ້ສາມາດຕິດຕາມ ແລະ ພິຈາລະນາ ຄື:

- ລະດັບ ແລະ ແນວໂນ້ມຂອງຄວາມສ່ຽງທີ່ສຳຄັນ ແລະ ຜົນກະທົບທີ່ມີຕໍ່ຄວາມພຽງພໍຂອງທຶນ ໃນສະພາບປົກກະຕິ ແລະ ພາວະວິກິດ;
- ຄວາມແທດເໝາະຂອງຂໍ້ສົມມຸດຖານ ທີ່ນຳໃຊ້ໃນການປະເມີນຜົນກະທົບຕໍ່ຄວາມພຽງພໍຂອງທຶນ, ຄວາມສົມບູນ ແລະ ຄວາມຖືກຕ້ອງຂອງຂໍ້ມູນ ທີ່ນຳໃຊ້ໃນຂະບວນການປະເມີນຄວາມພຽງພໍຂອງທຶນ;
- ຄວາມພຽງພໍຂອງທຶນ ໂດຍສົມທຽບລະຫວ່າງ ທຶນທີ່ມີໃນປັດຈຸບັນ ແລະ ທຶນທີ່ຄວນສຳຮອງເພີ່ມເຕີມ ເພື່ອຮອງຮັບຄວາມສ່ຽງທັງໝົດ ໃນສະພາບປົກກະຕິ, ພາວະວິກິດ ແລະ ຜົນການທົດສອບພາວະເຄັ່ງຕຶງ;
- ການປັບປຸງແຜນທຸລະກິດໃຫ້ສອດຄ່ອງກັບຄວາມພຽງພໍຂອງທຶນທີ່ມີຢູ່ ແລະ ລະດັບຄວາມພຽງພໍຂອງທຶນທີ່ຈຳເປັນຕ້ອງຮັກສາໃນອະນາຄົດ.

2. ພະແນກ ຫຼື ໜ່ວຍງານ ແລະ ພະນັກງານທີ່ຮັບຜິດຊອບສະເພາະ ຕ້ອງປະຕິບັດ ຄື:

- ກະກຽມ, ຕິດຕາມ ແລະ ລາຍງານຄວາມສ່ຽງ, ຄວາມພຽງພໍຂອງທຶນ ຢ່າງຄົບຖ້ວນ, ຖືກຕ້ອງ, ເຂົ້າໃຈງ່າຍ ແລະ ທັນກັບສະພາບການ ໃຫ້ແກ່ ສະພາບໍລິຫານ ແລະ ຜູ້ບໍລິຫານລະດັບສູງ ລວມທັງພາກສ່ວນທີ່ກ່ຽວຂ້ອງ;
- ກະກຽມ, ຕິດຕາມ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານທີ່ບໍ່ເປັນໄປຕາມແຜນ ໂດຍກຳນົດແນວທາງແກ້ໄຂ ເພື່ອສະເໜີຕໍ່ຜູ້ບໍລິຫານລະດັບສູງ ພິຈາລະນາ.

## ມາດຕາ 13 ການທົບທວນທີ່ເປັນເອກະລາດ

ຂະບວນການປະເມີນຄວາມພຽງພໍຂອງທຶນພາຍໃນທະນາຄານທຸລະກິດ ຕ້ອງໄດ້ຮັບການທົບທວນຈາກໜ່ວຍງານ ຫຼື ພະແນກ ທີ່ບໍ່ໄດ້ດຳເນີນ ແລະ ຄະນະທີ່ຮັບຜິດຊອບຄົ້ນຄວ້າ ຂະບວນການປະເມີນດັ່ງກ່າວແຕ່ເບື້ອງ

ຕົ້ນ ຫຼື ມອບໃຫ້ ໜ່ວຍງານ ຫຼື ພະແນກກວດສອບພາຍໃນ ແລະ ສາມາດນໍາໃຊ້ພາກສ່ວນພາຍນອກເປັນຜູ້ທົບທວນ ເພື່ອຮັບປະກັນຄວາມເປັນເອກະລາດໃນການທົບທວນ.

ພະແນກ ຫຼື ໜ່ວຍງານ ທີ່ຮັບຜິດຊອບທົບທວນຂະບວນການປະເມີນຄວາມພຽງພໍຂອງທຶນ ຕ້ອງມີຄວາມຮູ້, ຄວາມສາມາດ ດ້ານເຕັກນິກ ແລະ ວິຊາການທີ່ກ່ຽວຂ້ອງ ເພື່ອສາມາດດໍາເນີນການທົບທວນໄດ້ຢ່າງມີປະສິດທິພາບ.

ຄວາມຖີ່ໃນການທົບທວນຂະບວນການປະເມີນຄວາມພຽງພໍຂອງທຶນ ແມ່ນຂຶ້ນກັບ ຮູບແບບ, ລັກສະນະ, ຂະໜາດ ແລະ ຄວາມສັບຊ້ອນຂອງຜະລິດຕະພັນ ແຕ່ຢ່າງໜ້ອຍຕ້ອງທົບທວນ ໜຶ່ງ ຄັ້ງຕໍ່ປີ.

ການທົບທວນ ຂະບວນການປະເມີນຄວາມພຽງພໍຂອງທຶນ ຕ້ອງພິຈາລະນາເນື້ອໃນຕົ້ນຕໍ ດັ່ງນີ້:

1. ຄວາມສອດຄ່ອງກັບລະບຽບການຂອງທະນາຄານແຫ່ງ ສປປ ລາວ;
2. ຄວາມເໝາະສົມໃນຂະບວນການກໍານົດຄວາມສ່ຽງ;
3. ຄວາມຖືກຕ້ອງ ແລະ ຄວາມສົມບູນດ້ານຂໍ້ມູນທີ່ນໍາໃຊ້;
4. ຄວາມເໝາະສົມໃນວິທີການວັດແທກປະລິມານຂອງຄວາມສ່ຽງ;
5. ຄວາມສົມເຫດສົມຜົນ, ຄວາມຊັດເຈນ ແລະ ຄວາມສອດຄ່ອງ ລະຫວ່າງ ການທົດສອບພາວະເຄັ່ງຕຶງ, ການຕັ້ງຂໍ້ສົມມຸດຖານ, ການກໍານົດຂໍ້ມູນທີ່ນໍາໃຊ້ເຂົ້າໃນການທົດສອບ ແລະ ຜົນໄດ້ຮັບ.

ພະແນກ ຫຼື ໜ່ວຍງານ ທີ່ຮັບຜິດຊອບທົບທວນບວນຂະບວນການປະເມີນຄວາມພຽງພໍຂອງທຶນ ຕ້ອງລາຍງານຜົນການທົບທວນໂດຍກົງ ໃຫ້ສະພາບໍລິຫານ ໂດຍຜ່ານຄະນະກໍາມະການກວດສອບພາຍໃນ. ການປ່ຽນແປງທີ່ສໍາຄັນຕໍ່ຂໍ້ມູນຄວາມສ່ຽງຂອງທະນາຄານທຸລະກິດ, ຈຸດສຸມຍຸດທະສາດ, ແຜນທຸລະກິດ, ສະພາບແວດລ້ອມໃນການດໍາເນີນງານ ຫຼື ປັດໄຈອື່ນ ຕ້ອງໄດ້ຮັບການທົບທວນທີ່ເປັນເອກະລາດ.

## ໝວດທີ 3
## ການລາຍງານ, ການທົບທວນ, ການກວດກາ ແລະ ການປະເມີນຜົນ

### ມາດຕາ 14 ການລາຍງານ

ທະນາຄານທຸລະກິດ ຕ້ອງສົ່ງລາຍງານຂະບວນການປະເມີນຄວາມພຽງພໍຂອງທຶນປະຈໍາປີ ໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ພາຍໃນ ເດືອນ ເມສາ ຂອງປີຖັດໄປ ໂດຍປະຕິບັດຕາມ ແບບພິມການລາຍງານທີ່ທະນາຄານແຫ່ງ ສປປ ລາວ ກໍານົດໃນແຕ່ລະໄລຍະ.

### ມາດຕາ 15 ການທົບທວນ, ການກວດກາ ແລະ ການປະເມີນຜົນ

ກົມຄຸ້ມຄອງທະນາຄານທຸລະກິດ ມີໜ້າທີ່ ທົບທວນ, ກວດກາ ແລະ ປະເມີນ ການລາຍງານຂະບວນການປະເມີນຄວາມພຽງພໍຂອງທຶນ ເພື່ອຮັບປະກັນໃຫ້ທະນາຄານທຸລະກິດ ມີທຶນພຽງພໍໃນການຮອງຮັບຄວາມສ່ຽງ.

ເນື້ອໃນຂອງການ ທົບທວນ, ກວດກາ ແລະ ປະເມີນ ມີ ດັ່ງນີ້:

1. ການປະຕິບັດລະບຽບຄວາມພຽງພໍຂອງທຶນສໍາລັບທະນາຄານທຸລະກິດ;
2. ການສ້າງ ແລະ ການຈັດຕັ້ງປະຕິບັດຂະບວນການບໍລິຫານຄວາມສ່ຽງຂອງທະນາຄານທຸລະກິດ;
3. ບົດລາຍງານຂະບວນການປະເມີນຄວາມພຽງພໍຂອງທຶນພາຍໃນທະນາຄານທຸລະກິດ.

ໃນກໍລະນີ ກົມຄຸ້ມຄອງທະນາຄານທຸລະກິດ ເຫັນວ່າ ທະນາຄານທຸລະກິດ ມີຂໍ້ບົກພ່ອງໃນການບໍລິຫານຄວາມສ່ຽງໂດຍລວມ ຫຼື ດ້ານໃດໜຶ່ງ ຫຼື ມີຂະບວນການປະເມີນຄວາມພຽງພໍຂອງທຶນ ບໍ່ເໝາະສົມກັບສະພາບຄວາມເປັນຈິງ ກົມຄຸ້ມຄອງທະນາຄານທຸລະກິດ ສາມາດປະຕິບັດມາດຕະການແຕ່ຫົວທີ ຕໍ່ທະນາຄານທຸລະກິດ ໂດຍທັນທີ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

**ມາດຕາ 16 ການຈັດຕັ້ງປະຕິບັດ**

ກົມຄຸ້ມຄອງທະນາຄານທຸລະກິດ ເປັນເຈົ້າການຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ທະນາຄານທຸລະກິດ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 17 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ຮັກສາການຜູ້ວ່າການທະນາຄານແຫ່ງ ສປປ ລາວ**

**ວັດທະນາ ດາລາລອຍ**